# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 10 ສິງຫາ 2008 (08-10-2008)

## <u>ຊີວິດທີ່ສັດຊື່</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ເຮັບເຣີ 2:14-18; 3:1, 5-14

**<u>ຄຳຖາມຊີວິດ:</u>** ອັນໃດຈະຊ່ວຍໃຫ້ຂ້າພະເຈົ້າຕັ້ງຫມັ້ນຢູ່ໃນຄວາມສັດຊື່ຕໍ່ພຣະເຈົ້າ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະເຈົ້າປະທານພະລັງໃຫ້ຜູ້ທີ່ເຊື່ອໃນພຣະອົງຕັ້ງຢູ່ໃນຄວາມສັດຊື່ຕໍ່ພຣະອົງ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍໃຫ້ທ່ານຄົ້ນຫາຫົນທາງດີທີ່ສຸດຈາກພຣະເຈົ້າໃນຊີວິດປະຈຳວັນຂອງທ່ານໂດຍ:

- ເພື່ອຊອກຫາຫົນທາງໃຫ້ມີພະລັງຕັ້ງໝັ້ນໃນຄວາມສັດຊື່ຕໍ່ພຣະເຈົ້າ
- ຕັດສິນໃຈຈະເພິ່ງພະລັງຈາກພຣະເຈົ້າເພື່ອຕັ້ງໝັ້ນຢູ່ໃນຄວາມສັດຊື່ນັ້ນ.

ມີບ່ອນທ່ອງທ່ຽວແຫ່ງນຶ່ງໃນຣັດ ໄວໂອມິງ ທີ່ມີຄຳຂວັນຂຽນໄວ້ວ່າ, "ສັດຊື່ສເມີ." ຜູ້ຄົນໄດ້ຕັ້ງຊື່ນີ້ໃຫ້ກໍເພາະເລີ້ມແຕ່ປີ 1870 ບ່ອນທ່ອງທຽວແຫ່ງນີ້ໄດ້ມີນ້ຳພຸທີ່ສົ່ງນ້ຳຮ້ອນຂຶ້ນໄປເທິງອາກາດສູງເຖິງ 100 ແມດເປັນເວລານານຈົນເຖິງທຸກວັນນີ້.

ຄຳຖາມມີຢູ່ວ່າ ທ່ານໄດ້ມີຊີວິດທີ່ມີຄວາມສັດຊື່ຢ່າງນີ້ບໍ່? ທ່ານຮູ້ບ່ອນທີ່ເອົາພະລັງເພື່ອໃຫ້ທ່ານມີຄວາມສັດຊື່ຕໍ່ພຣະເຈົ້າຫລືບໍ່? ພຣະເຈົ້າບໍ່ພຽງແຕ່ເອີ້ນເອົາພວກເຮົາໃຫ້ມີຄວາມເຊື່ອໃນພຣະອົງ ແຕ່ພຣະອົງຍັງປະທານກຳລັງເພື່ອຊ່ອຍເຮົາໃຫ້ຕັ້ງໝັ້ນຄົງຢູ່ໃນຄວາມສັດຊື່ຕໍ່ພຣະອົງອີກດ້ວຍ. ບົດຮຽນວັນອາທິດນີ້ໄດ້ເວົ້າເຖິງບ່ອນມາຂອງພະລັງຕໍ່ຜູ້ທີ່ເຊື່ອ.

## <u>ສຶກສາພຣະຄັມພີ</u>

### 1. <u>ຜູ້ຊ່ວຍຂອງຂ້າພະເຈົ້າ</u> (ເຮັບເຣີ 2:14-18)

ອົງພຣະເຢຊູສາມາດຊ່ອຍທ່ານໃຫ້ສັດຊື່. ໃຫ້ສັງເກດເບິ່ງ 4 ວິທີທາງທີ່ພຣະອົງຊ່ວຍ. *ນຶ່ງ, ພຣະເຢຊູໄດ້ປົດອຳນາດພະຍາມານບໍ່ໃຫ້ຢູ່ເໜືອເຮົາ.* ຂໍ້ 14 ໄດ້ ກ່າວວ່າ **ດຽວນີ້** ພຣະຄຣິດໄດ້ເຮັດໃຫ້ເຮົາ **ກາຍເປັນບຸດຂອງພຣະເຈົ້າ.** ແມ່ນຫຍັງເປັນສິ່ງເຮັດຢ່າງນີ້ໄດ້ເໝືອນພວກເຮົາ? ອົງພຣະເຢຊູເປັນມະນຸດເຕັມບໍຣິບູນ **ມີເນື້ອໜັງແລະເລືອດ.** ດັ່ງນັ້ນ, ໂດຍການຕາຍຂອງອົງພຣະເຢຊູ ເພື່ອພຣະອົງໄດ້ທຳລາຍອຳນາດແຫ່ງຄວາມຕາຍ-ຄືພະຍາມານ. ຄຳເວົ້າທີ່ແປວ່າ "ທຳລາຍ" ມີຄວາມໝາຍວ່າປົດອຳນາດ ຫລືເຮັດບໍ່ໃຫ້ມີພິດ.

*ສອງ, ພຣະເຢຊູໄດ້ນຳເຮົາໃຫ້ອອກຈາກຄວາມຢ້ານກົວຄວາມຕາຍ.* ສິ່ງທີ່ມະນຸດເຮົາຢ້ານຫລາຍແມ່ນຄວາມຕາຍ. ແຕ່ຂໍ້ 15 ໄດ້ກ່າວວ່າຍ້ອນຄວາມຕາຍຂອງພຣະຄຣິດເຮັດໃຫ້ເຮົາເປັນ**ອິສລະຈາກການເປັນຂ້າທາດຄວາມຢ້ານຕາຍ.** ເພາະພຣະຄຣິດໄດ້ຄືນມາຈາກຄວາມຕາຍ ພຣະອົງໄດ້ທຳລາຍໄລພິດຂອງຄວາມຕາຍແລ້ວ. (1 ກຣທ.15:55)

*ສາມ, ພຣະເຢຊູໄດ້ເອົາພຣະພິໂຣດອອກຈາກຄວາມບາບຂອງພວກເຮົາ.* ຄວາມໝາຍໃນຂໍ້ 16 ແມ່ນ ພຣະຄຣິດບໍ່ຕ້ອງການຊ່ວຍພວກເທວະດາ ເພາະພວກເຂົາບໍ່ໄດ້ມີຄວາມຜິດບາບ. ແຕ່ພຣະເຈົ້າຕ້ອງການທີ່ຈະຊ່ອຍຜູ້ເປັນເຊື້ອສາຍຂອງອັບຣາຮາມ ຜູ້ເປັນສາຍໃຍໃນຄວາມເຊື່ອຈາກອັບຣາຮາມ. ອາຈານໂປໂລ ໄດ້ກ່າວໃນຄາລາເຕັຽ 3:7 ວ່າ "ຜູ້ທີ່ມີຄວາມເຊື່ອແມ່ນລູກຂອງອັບຣາຮາມ." ເຖິງແມ່ນວ່າເຮົາມີຄວາມທເຊື່ອ ພວກເຮົາຍັງຕ້ອງການພຣະເຈົ້າຊ່ວຍ

ໃຫ້ພົ້ນຈາກຄວາມບາບ. ເຮັບເຣີ 2:17 ໄດ້ບອກພວກເຮົາວິທີທີ່ອົງພຣະເຢຊູໄດ້ຊ່ອຍພວກເຮົາ; ການຮັບໃຊ້ໃນໂລກນີ້ຂອງອົງພຣະເຢຊູໄດ້ເຮັດໃຫ້ພຣະອົງ**ກາຍເປັນຜູ້ມີຄວາມເມດຕາ ແລະເປັນປະໂຣຫິດສັດຊື່.** ໃນພຣະຄັມພີເດີມປະໂຣຫິດໄດ້ຖວາຍເຄື່ອງບູຊາໃນວັນສຳຄັນເພື່ອຈະເອົາຄວາມໂກດຮ້າຍຂອງພຣະເຈົ້າຕໍ່ຄວາມບາບອອກໄປ. ດຽວນີ້ການຖວາຍຂອງອົງພຣະເຢຊູ**ເປັນການໄຖ່ສິນຄອນເພື່ອຈະຍົກເອົາຄວາມບາບຂອງມະນຸດອອກໄປໄດ້.** ຄຳເວົ້າວ່າການໄຖ່ສິນຄອນນັ້ນມີຄວາມໝາຍວ່າ ເອົາຄວາມໂກດຮ້າຍຂອງພຣະເຈົ້າອອກໄປຈາກຄົນບາບ. ເທິງໄມ້ກາງແຂນພຣະເຢຊູໄດ້ຍົກເອົາຄວາມຜິດບາບໄປຈາກພວກເຮົາ ແຕ່ເອົາໄປໃສ່ບ່າຂອງພຣະອົງເອງ. ( 2 ກຣທ. 5:21).

ສີ່, ອົງພຣະເຢຊູໄດ້ຊະນະການທົດລອງ ແລະພຣະອົງມີອຳນາດທີ່ຈະຊ່ອຍພວກເຮົາໃຫ້ເອົາຊະນະການທົດລອງເໝືອນກັນ. ພຣະເຢຊູບໍ່ພຽງແຕ່ເປັນພຣະເຈົ້າເທົ່ານັ້ນ ແຕ່ພຣະອົງຍັງເປັນມະນຸດທີ່ສົມບູນເໝືອນກັນ. ຂໍ້ 17 ໄດ້ບອກພວກເຮົາວ່າ **ພຣະອົງກາຍເປັນເໝືອນອ້າຍນ້ອງຂອງພວກເຮົາທຸກໆອັນ.** ຂໍ້ 18 ໄດ້ບອກສອງທາງທີ່ພຣະອົງເປັນເໝືອນພວກເຮົາ: **ພຣະອົງກໍຍັງໄດ້ຖືກທົດລອງ ແລະທຸກທໍຣະມານ.** ຄຳວ່າທົດລອງແມ່ນເວົ້າເຖິງການທົດລອງໃຫ້ເຮັດບາບ. ແມ່ນແທ້ອົງພຣະເຢຊູໄດ້ຖືກທົດລອງເໝືອນກັບພວກເຮົາ ແຕ່ພຣະອົງບໍ່ໄດ້ເຮັດບາບ (ຮຣ. 4:15). **ອົງພຣະເຢຊູສາມາດຊ່ອຍຜູ້ທີ່ຖືກທົດລອງໃຫ້ລອດພົ້ນໄດ້** ເພາະພຣະອົງກໍເໝືອນກັນໄດ້ຜ່ານການທົດລອງມາແລ້ວ.

## 2. <u>ການຖືກຮຽກເອີ້ນຂອງຂ້າພະເຈົ້າ</u> (ເຮັບເຣີ 3:1, 5-6)

**ພິຈາຣະນາ**

ຄຳວ່າ ພິຈາຣະນາ ເປັນຄວາມເວົ້າສອງຄຳໃນພາສາກຣີກ ແມ່ນມີຄວາມໝາຍ "ລຸ່ມ ແລະ ຈິດໃຈ." ຖ້າເປັນຄຳກິຣິຍາ ກໍແມ່ນການຕັດສິນໃຈໃນບາງສິ່ງຢ່າງແລະບໍ່ມີການປ່ຽນແປງ. ເຣື່ອງທີ່ເວົ້ານີ້ໄດ້ເຫັນຢູ່ໃນມັດທາຍ 7:3 ພຣະເຢຊູໄດ້ຕ້ອງຕິຄົນມັກຊອກເອົາຄວາມຜິດຂອງຄົນອື່ນ ແລະບໍ່ເຫັນຄວາມຜິດຂອງຕົນເອງເລີຍ. ໃນລູກາ 12:24 ອົງພຣະເຢຊູ ໄດ້ຮ້ອງຂໍພວກເຮົາໃຫ້ເບິ່ງນົກປ່າທີ່ພຣະເຈົ້າໄດ້ລ້ຽງເກືອຕລອດໄປ. ເປັນເໝືອນຜູ້ເປັນພໍ່ສອນລູກໃຫ້ຫລິ້ນກິລາ ພໍ່ໄດ້ບອກລູກວ່າ, "ຢ່າເອົາສາຍຕາອອກໄປຈາກໝາກບານ," ເຊັ່ນກັນ ຜູ້ຂຽນປື້ມເຮັບເຣີ ໄດ້ຮ້ອງຂໍໃຫ້ຜູ້ອ່ານ ບໍ່ໃຫ້ເອົາຕາອອກຈາກອົງພຣະເຢຊູ.

ການເອີ້ນຂອງເຮົາຈາກພຣະເຈົ້າເຮັດໃຫ້ເຮົາມີຄວາມສັດຊື່ຕໍ່ພຣະເຈົ້າ. ພວກເຮົາ **ເປັນຄົນບໍຣິສຸດ.** ຄຳເວົ້າວ່າບໍຣິສຸດ ແມ່ນການແຍກອອກໄວ້ຕ່າງຫາກເພື່ອຮັບໃຊ້**ຄຳຮຽກເອີ້ນຈາກສວັນ.** ຄຳຮຽກເອີ້ນຈາກສວັນກໍແມ່ນເພື່ອສວັນນັ້ນເອງ.

ພວກເຮົາຖືກເອີ້ນເອົາໃຫ້ເອົາໃຈໃສ່ຕໍ່ອົງພຣະເຢຊູ. ພວກເຮົາຕ້ອງພິຈາຣະນາເຖິງອົງພຣະເຢຊູ, ຜູ້ເປັນອັຄສາວົກແລະມະຫາປະໂຣຫິດຂອງຜູ້ທີ່ເຮົາສາລະພາບບາບຕໍ່. ພຣະເຢຊູເປັນ**ອັຄສາວົກ**ໃນລັກສະນະທີ່ມີຄວາມໝາຍວ່າ "ຜູ້ຖືກສົ່ງອອກໄປ." ພຣະເຢຊູຊົງເວົ້າວ່າ, "ພຣະບິດາໄດ້ສົ່ງເຮົາມາຢ່າງໃດ ຝ່າຍເຮົາກໍໃຊ້ທ່ານໄປຢ່າງນັ້ນ." (ໂຢຮັນ 20:21). ພຣະເຢຊູເປັນ**ມະຫາປະໂຣຫິດ**ໃຫ້ລັກສະນະ ພຣະອົງເປັນຜູ້ຕາງໜ້າເຮົາຕໍ່ພຣະເຈົ້າ ແລະຕາງໜ້າພຣະເຈົ້າຕໍ່ພວກເຮົາ. ການທີ່ພຣະເຢຊູເປັນອົງພຣະຜູ້ເປັນເຈົ້ານັ້ນແມ່ນການຍອມຮັບ **ແລະສາຣະພາບຂອງພວກເຮົາ.** ຄວາມສຳຄັນທີ່ກ່າວເຖິງພຣະເຢຊູໄດ້ແຜ່ກວ້າງອອກໄປໃນປື້ມເຮັບເຣີ.

ເທົ່າທີ່ພວກເຮົາໄດ້ພິຈາຣະນາເບິ່ງຄຳຮຽກເອີ້ນຈາກພຣະເຈົ້າ, ພວກເຮົາເຫັນວ່າພຣະອົງເປັນແບບຢ່າງທີ່ໃຫຍ່ກວ່າໂມເຊ. ໃນປື້ມຈົດເຊັນບັນຊີ 12:7, ພຣະເຈົ້າໄດ້ເວົ້າວ່າ ໂມເຊ "ສັດຊື່ທັງຄອບຄົວ." ໝາຍເຖິງຄວາມສັດຊື່ທີ່ໂມເຊ ໄດ້ນຳພາພວກອິສຣາເອັນ. ເຮັບເຣີ 3:5-6 ໄດ້ກ່າວວ່າ **ໂມເຊ ເປັນຂ້າໃຊ້ສັດຊື່...ແຕ່ອົງພຣະຄຣິດສັດຊື່ໃນການເປັນພຣະບຸດ.**

ອັນໃດເປັນສັນຍາລັກວ່າພວກເຮົາເປັນພາກສ່ວນໃນຄອບຄົວຂອງພຣະເຈົ້າ? ຂໍ້ 6 ໄດ້ກ່າວວ່າ **ຖ້າພວກເຮົາຍຶດຖື**

**ເອົາຄວາມກ້າຫານ ແລະຄວາມພາກພູມໃຈໃນຄວາມຫວັງນັ້ນໄວ້.** ຄຳເວົ້ານີ້ບໍ່ໄດ້ເວົ້າເຖິງໃຫ້ຍຶດຖືກໃຫ້ດີ ເພື່ອຈະບໍ່ຫລົງທາງໄປຊຶ່ງເປັນອັນຕະລາຍ. ຄຳເວົ້າທີ່ວ່າຍຶດຖືເອົາໄວ້ໃຫ້ດີສາມາດແປໄດ້ວ່າ "ເຈັບ" ໃນປື້ມມັດທາຍ ໒1:39 ແລະ "ຍຶດເອົາ" ໃນ 1 ໂກຣິນໂທ ໗:30. ແປໄດ້ອີກຄຳນຶ່ງກໍແມ່ນ ຄົນມີຫລືຄົນບໍ່ມີ. **ຄວາມຫວັງ**ທີ່ເຮົາຍຶດເອົານີ້ໄດ້ເຮັດໃຫ້ຜູ້ທີ່ເຊື່ອແທ້ຈິງເປັນຄົນສັດຊື່ຈົນເຖິງທີ່ສຸດປາຍ.

## 3. <u>ພຣະຄັມພີຂອງຂ້າພະເຈົ້າ</u> (ເຮັບເຣີ 3:7-11)

ພຣະຄຳຂອງພຣະເຈົ້າໄດ້ເປັນສິ່ງໜູນໃຈພວກເຮົາໃຫ້ສັດຊື່ຕໍ່ພຣະເຈົ້າ. ຄຳສອນຕອນນີ້ໄດ້ບອກໃຫ້ພວກເຮົາຮູ້ເຖິງວິທີທີ່ສາມາດເອົາພຣະຄັມພີມາປະກອບໃຊ້ກັບຄົນສມັຍຕໍ່ໄປ ພ້ອມດ້ວຍສມັຍຂອງພວກເຮົາຄືກັນ:

ເຮັບເຣີ 3:7-11 ແມ່ນອ້າງເຖິງເພງສັຣເສີນບົດ 95:7-11 ຍັງອ້າງເຖິງການຮັບໃຊ້ຂອງໂມເຊ. ບົດຮຽນໄດ້ສອນໃນອາທິດນີ້ກໍຍັງເອົາມາປະກອບໃນທຸກວັນນີ້ໄດ້ຄືກັນເພາະຄວາມຈິງໃນພຣະຄັມພີບໍ່ມີໝົດອາຍຸ. ຂໍ້ ໗ ໄດ້ເຫັນວ່າຄຳອ້າງເຖິງເພງສັຣເສີນບົດ 95 ນັ້ນໄດ້ຖືກດົນບັນດານຈາກອົງ**ພຣະວິນຍານບໍຣິສຸດ.** ຜູ້ຂຽນເພງສັຣເສີນໄດ້ກ່າ ເຖິງ **ຜູ້ກະບົດ** ຂອງພວກອິສຣາເອັນຕໍ່ການນຳພາຂອງໂມເຊ ເວລາພວກເຂົາເດີນທາງອອກຈາກປະເທດເອຢິບ. **ບັນພະບຸຣຸດ**ຂອງພວກຢິວໄດ້ທົດລອງພຣະເຈົ້າ ແລະທົດສອບຄວາມອົດທົນຂອງພຣະອົງ. ດັ່ງນັ້ນ, ພຣະເຈົ້າໄດ້ລົງໂທດພວກເຂົາໃຫ້ເດີນທາງຫລົງຢູ່ໃນປ່າກັນດານເປັນ**ເວລາ 40 ປີ.**

ເຫດການສອງຢ່າງທີ່ພວກອິສຣາເອັນກະບົດນັ້ນໄດ້ເກີດຂຶ້ນທີ່ ມັດຊາດແລະເມຣິແບດ ໃນປື້ມອົບພະຍົບ 1໗:1-7 ແລະໃນປື້ມຈົດເຊັນບັນຊີ ໒0:1-13. ຄົນພວກນັ້ນຕໍ່ວ່າເພາະຂາດນ້ຳດື່ມ. ໂມເຊກໍກາຍເປັນຄົນບໍ່ເຊື່ອຟັງພຣະເຈົ້າເພາະພຣະເຈົ້າສັ່ງວ່າໃຫ້ເວົ້າກັບກ້ອນຫີນ, ໂມເຊໃຈຮ້າຍເລີຍຕີກ້ອນຫີນ. ໃນທີ່ສຸດພຣະເຈົ້າບອກໂມເຊ ວ່າລາວຈະບໍ່ໄດ້ເຂົ້າໃນແຜ່ນດິນພຣະສັນຍາ. (ພຣະບັນຍັດ ສອງ 34:1-8)

ພຣະເຈົ້າກ່າວວ່າຊາດທີ່ກະບົດເອີຍ, ເຮົາສາບານດ້ວຍຄຳໂກດວ່າ, "**ພວກເຂົາຈະບໍ່ໄດ້ເຂົ້າໄປໃນທີ່ພັກຂອງເຮົາ.**" ທີ່ມີຄວາມໝາຍວ່າ ພວກເຂົາຈະຕາຍໃນປ່າກັນດານໝົດດ້ວຍການຫລົງທາງ.

ນັກຂຽນເພງສັຣເສີນໄດ້ເອົາບົດຮຽນຈາກປ່າກັນດານໃນເວລານັ້ນ ແລະກ່າວວ່າ **ວັນນີ້ ຖ້າທ່ານໄດ້ຍິນສຽງຂອງພຣະເຈົ້າແລ້ວຢ່າມີໃຈແຂງກະດ້າງ.** ໂມເຊ ແລະຄົນໃນສມັຍນັ້ນບໍ່ມີໂອກາດໄດ້ເຂົ້າໃນແຜ່ນດິນແຫ່ງພຣະສັນຍາ. ນັກຂຽນເຕືອນຄົນໃນສມັຍຂອງຕົນວ່າ ຖ້າພວກເຂົາມີໃຈແຂງກະດ້າງ ພວກເຂົາກໍຈະບໍ່ຮູ້ທີ່ພັກຫລືສັນຕິສຸກຂອງພຣະເຈົ້າຄືກັນ. ພວກເຮັບເຣີກໍຊັກຊວນໃຫ້ເອົາໃຈໃສ່ບົດຮຽນນີ້ຕໍ່ຊີວິດຂອງຕົນ ບໍ່ໃຫ້ມີໃຈແຂງກະດ້າງ. ພວກເຮົາກໍເຊັ່ນກັນບໍ່ໃຫ້ມີໃຈແຂງກະດ້າງ.

## 4. <u>ຄຣິສຕະຈັກຂອງຂ້າພະເຈົ້າ</u> (ເຮັບເຣີ 3:1໒-14)

ຍັງມີອີກບ່ອນນຶ່ງທີ່ເຮັດໃຫ້ພວກເຮົາເປັນຄົນສັດຊື່ໝັ້ນຄົງຕໍ່ພຣະເຈົ້າ-ຄືຄຣິສຕະຈັກທ້ອງຖິ່ນ. ຜູ້ເຊື່ອຄົນອື່ນຕ້ອງການຢາກໃຫ້ພວກເຮົາມີຄວາມຮັບຜິດຊອບ.

ຂໍ້ 1໒ ໄດ້ເຕືອນ **ຜູ້ທີ່ເຊື່ອໃຫ້ລະວັງ.** ຄຣິສະຕຽນໃຫ້ລະວັງ**ໃນຈິດໃຈບໍ່ໃຫ້ໃຈອອກ**ໄປຈາກ**ພຣະເຈົ້າຜູ້ຊົງພຣະຊົນຢູ່,** ນັ້ນໝາຍຄວາມຄຣິສະຕຽນສາມາດເສັຽຄວາມພົ້ນໄດ້ບໍ່? ບໍ່ແມ່ນ, ແຕ່ຄຳເຕືອນນີ້ເພື່ອເປັນການແນ່ນອນວ່າເຮົາໄດ້ຮັບຄວາມພົ້ນແທ້ຫລືຍັງ. ຂໍ້ 14 ໄດ້ສອນໃຫ້ຄຣິສະຕຽນໃຫ້ມີຄວາມອົດທົນ. **ຜູ້ທີ່ເຊື່ອແທ້ຕ້ອງຕັ້ງໝັ້ນຈົນເຖິງທີ່ສຸດ.** ພວກເຂົາຈະເປັນຄົນສັດຊື່ຕໍ່ປະສົບການທີ່ເຂົາໄດ້ຮັບຄວາມພົ້ນຊຶ່ງເຂົາ**ໄດ້ເລີ້ມຕົ້ນມາ.** ຂ້າພະເຈົ້າໄດ້ຍິນອາຈານໃຫຍ່ ສອນໃນໂຮງຮຽນພຣະຄັມພີວ່າ, "ຄວາມເຊື່ອທີ່ແທ້ຈິງ ເປັນຄວາມເຊື່ອທີ່ເລີ້ມຕົ້ນດີ."

ຂໍ້ 13 ໄດ້ສືບຕໍ່ຄຳເຕືອນດີຈາກຂໍ້ 1໒ ເພື່ອໃຫ້ມີສິ່ງດີເກີດຂຶ້ນໃນບັ້ນສຸດທ້າຍ: ຄຣິສຕະຈັກທ້ອງຖິ່ນຕ້ອງມີການ**ໜູນໃຈກັນທຸກໆວັນ.** ພຣະເຈົ້າບໍ່ຕ້ອງການພວກເຮົາໃຫ້ເປັນຄຣິສະຕຽນ "ຊາຍເດີນດ່ຽວ" ບໍ່ໃຫ້ຢູ່ຫ່າງຈາກຄຣິສຕະຈັກທ້ອງຖິ່ນ. ພວກເຮົາຕ້ອງການຜູ້ເຊື່ອຄົນອື່ນແນະນຳ, ໃຫ້ກຳລັງໃຈ, ເພື່ອພວກເຮົາຈະສືບຕໍ່ມີຄວາມສັດຊື່ໃນອົງພຣະຄຣິດເຈົ້າ. ການຮັບຜິດຊອບຕໍ່ກັນແລະກັນນັ້ນຕ້ອງມີ**ເພື່ອພວກທ່ານຈະບໍ່ມີໃຈແຂງກະດ້າງເກີດຂຶ້ນດ້ວຍການ**

**ຫລອກລວງຂອງຄວາມບາບ.** ສະມາຊິກໃນຄຣິສຕະຈັກບໍ່ຄວນຍອມແພ້ຕໍ່ສະມາຊິກຜູ້ບໍ່ເອົາໃຈໃສ່ມາຮ່ວມປະຊຸມເປັນປະຈຳ. ຍັງມີເວລາທີ່ຈະນຳເອົາພວກຄົນຢ່າງນີ້ຄືນມາໃຫມ່ **ຖ້າຫາກວ່າວັນນີ້ຍັງມີຢູ່.**

## ບົດຮຽນໃນຊີວິດ

ຄຣິສະຕຽນຕ້ອງການຄວາມຊ່ວຍເຫລືອເພື່ອຈະເປັນຄົນສັດຊື່ຕໍ່ອົງພຣະຄຣິດ. ພວກເຮົາຕ້ອງການຄວາມຊ່ວຍເຫລືອໃນເມື່ອເຮົາໄດປັກຕາເບິ່ງອົງພຣະເຢຊູ, ເຊື່ອຟັງພຣະຄັມພີ, ຮັບຜິດຊອບດ້ວຍຄວາມສັດຊື່ຕໍ່ຄຣິສຕະຈັກ. ເຮັດແນວໃດເພື່ອເຮົາຈະມີຄວາມສັດຊື່ຕໍ່ອົງພຣະຄຣິດເຈົ້າ?

- ສຶກສາຊີວິດຂອງອົງພຣະເຢຊູ. ຊອກເບິ່ງຫົນທາງທີ່ພຣະອົງໃຊ້ໃນການຕໍ່ສູ້ກັບບັນຫາທີ່ທ່ານໄດ້ປະເຊີນ. ທ່ານຈະເປັນເຫມືອນພຣະອົງບໍ່ໄດ້ ຖ້າຫາກທ່ານບໍ່ຮູ້ຈັກເຣື່ອງຂອງພຣະອົງ.
- ໃຫ້ຕຶກຕອງເຖິງສິ່ງອົງພຣະເຢຊູໄດ້ກະທຳເພື່ອທ່ານ. ທ່ານບໍ່ສາມາດຮັກພຣະອົງໄດ້ ຖ້າທ່ານບໍ່ເອົາໃຈໃສ່ຕໍ່ພຣະອົງ.
- ອ່ານພຣະຄັມພີທຸກມື້. ມີແຜນການອ່ານພຣະຄັມພີໃຫ້ຈົບພາຍໃນນຶ່ງປີ, ຕົວຢ່າງໃນປຶ້ມແນະນຳຕ່າງໆ. ພຣະຄັມພີຈະຊ່ອຍໃຫ້ທ່ານບໍ່ຕົກໄປເປັນເຍື່ອຂອງຄວາມບາບອີກ.
- ເຂົ້າຮ່ວມກັບກຸ່ມຄຣິສະຕຽນອື່ນໆ ຫລືຊອກຫາຄູ່ອ້ອນວອນນຳກັນ ຜູ້ທີ່ທ່ານສາມາດເຊື່ອໄດ້ວ່າຄົນນັ້ນສາມາດເກັບຄວາມລັບໄວ້ໄດ້. ໃຫ້ແບ່ງປັນຄວາມຫຍຸ້ງຍາກສັບສົນຕໍ່ກັນດ້ວຍຄວາມສັດຊື່ ແລະໃຫ້ອ້ອນວອນນຳກັນເປັນປະຈຳ.

ມີສາສນາທູດໄດ້ຊອກໂອກາດໃຫ້ຄົນອື່ນຮັບໃຊ້ຮ່ວມກັນໃນທີ່ພັກຂອງພວກບໍ່ມີເຮືອນຢູ່. ໂດຍການຮັບໃຊ້ຢ່າງນີ້ພວກເຂົາໄດ້ເຫັນການປ່ຽນແປງເກີດຂຶ້ນເພາະພວກເຂົາໄດ້ມີພາກສ່ວນຊ່ອຍ. ສິ່ງນີ້ເປັນປໂຍດຫລາຍທີ່ພວກເຂົາໄດ້ໜູນໃຈກັນແລະກັນຮັບໃຊ້ ເພື່ອຈະເອົາຊະນະຕໍ່ຄວາມລອກລວງຂອງຄວາມຜິດບາບ.

ອຸປຖັມໂດຍລາວຊາວເທີນບັບຕິສສັມພັນwww.lsbf.org.,by BV.